ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 007 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 145/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 145 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຄັ້ງວັນທີ 3 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 66 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍທະນາຄານແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັບປະກັນ ສະຖຽນລະພາບທາງດ້ານເງິນຕາ, ຄວາມໝັ້ນຄົງຂອງສະຖາບັນການເງິນ ແລະ ຄວາມເຂັ້ມແຂງ ແລະ ທັນສະໄໝ ຂອງລະບົບການຊຳລະ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 (ປັບປຸງ) ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ທະນາຄານກາງຂອງ ສປປ ລາວ ຊຶ່ງເປັນອົງການຄຸ້ມຄອງມະຫາພາກທາງດ້ານ ເງິນຕາ, ສະຖາບັນການເງິນ ແລະ ລະບົບການຊຳລະ.

ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເອີ້ນວ່າ ທະນາຄານແຫ່ງ ສປປ ລາວ ແລະ ຂຽນຫຍໍ້ວ່າ "ທຫລ".

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

2. **ທະນາຄານ** ໝາຍເຖິງ ທະນາຄານທຸລະກິດ ແລະ ທະນາຄານອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ;

3. **ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ** ໝາຍເຖິງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ບໍລິສັດຄ້ຳປະກັນສິນເຊື່ອ, ບໍລິສັດບໍລິຫານໜີ້ ແລະ ຊັບສິນ, ບໍລິສັດເຊົ່າສິນເຊື່ອ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈຳ, ຜູ້ດຳເນີນທຸລະກິດການຊຳລະ ແລະ ສະຖາບັນການເງິນອື່ນທີ່ບໍ່ແມ່ນທະນາຄານ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ;

4. **ເງິນ** ໝາຍເຖິງ ເງິນຕາຂອງ ສປປ ລາວ ໃນຮູບແບບ ທະນະບັດ, ເງິນຫຼຽນ, ເງິນດິຈິຕອນ ແລະ ເງິນຮູບແບບອື່ນ ທີ່ຖືກຕ້ອງຕາມກົດໝາຍ;

5. **ທະນະບັດ** ໝາຍເຖິງ ເງິນໃນຮູບແບບຂອງໃບເຈ້ຍ ຫຼື ປລາສຕິກ;

6. **ເງິນຫຼຽນ** ໝາຍເຖິງ ເງິນໃນຮູບແບບຂອງໂລຫະ;

7. **ເງິນດິຈິຕອນ** ໝາຍເຖິງ ສະກຸນເງິນກີບເປັນດິຈິຕອນ ທີ່ອອກໂດຍ ທຫລ ຊຶ່ງມີຄຸນຄ່າທຽບເທົ່າທະນະບັດ ແລະ ເງິນຫຼຽນ;

8. **ການພິມເງິນ** ໝາຍເຖິງ ການພິມທະນະບັດ, ການຫຼໍ່ເງິນຫຼຽນ, ການອອກເງິນດິຈິຕອນທີ່ອອກໂດຍ ທຫລ ແລະ ເງິນຮູບແບບອື່ນ ທີ່ຖືກຕ້ອງຕາມກົດໝາຍ;

9. **ເອກະສານມີຄ່າ** ໝາຍເຖິງ ໜັງສືຢັ້ງຢືນພັນທະໃນການຊຳລະໜີ້ ລະຫວ່າງຜູ້ອອກ ກັບຜູ້ຖືຄອງເອກະສານມີຄ່າ ຊຶ່ງປະກອບດ້ວຍ ພັນທະບັດ, ໃບຢັ້ງຢືນເງິນຝາກ ແລະ ເຄື່ອງມືອື່ນ ໂດຍມີການກຳນົດເງື່ອນໄຂດ້ານໄລຍະເວລາ, ດອກເບ້ຍ ແລະ ເງື່ອນໄຂອື່ນ;

10. **ວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ** ໝາຍເຖິງ ວິສາຫະກິດທີ່ມີຄວາມສຳຄັນ, ຈຳເປັນ ແລະ ເປັນບຸລິມະສິດ ເພື່ອສະໜັບສະໜູນພາລະບົດບາດຂອງ ທຫລ ເປັນຕົ້ນ ວຽກງານ ຂໍ້ມູນ ຂ່າວສານສິນເຊື່ອ, ກິດຈະການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ, ການພັດທະນາລະບົບການຊຳລະ, ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ;

11. **ຫົວໜ່ວຍສະໜັບສະໜູນສະຖຽນລະພາບດ້ານການເງິນ** ໝາຍເຖິງ ຫົວໜ່ວຍທີ່ຈັດຕັ້ງປະຕິບັດ ວຽກງານປົກປ້ອງເງິນຝາກ, ວຽກງານຄ້ຳປະກັນສິນເຊື່ອ ແລະ ຫົວໜ່ວຍອື່ນ ທີ່ສະໜັບສະໜູນການເຄື່ອນໄຫວຂອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ປອດໄພ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບທະນາຄານແຫ່ງ ສປປ ລາວ**

ລັດ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ ເພື່ອເຮັດໃຫ້ການຄຸ້ມຄອງມະຫາພາກທາງດ້ານ ເງິນຕາ, ສະຖາບັນການເງິນ ແລະ ລະບົບການຊຳລະເຂັ້ມແຂງ ແລະ ທັນສະໄໝ ດ້ວຍການກຳນົດຍຸດທະສາດ, ກໍ່ສ້າງໂຄງລ່າງພື້ນຖານ, ສ້າງ, ບຳລຸງ ບຸກຄະລາກອນ ແລະ ປະກອບວັດຖຸປະກອນທີ່ທັນສະໄໝ ຕາມຄວາມເໝາະສົມ.

ລັດ ຊຸກຍູ້, ສົ່ງເສີມ ແລະ ປຸກລະດົມ ທົ່ວສັງຄົມ ໃຫ້ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນການເຄື່ອນໄຫວວຽກງານຂອງ ທຫລ.

**ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ**

ການເຄື່ອນໄຫວວຽກງານຂອງ ທຫລ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
2. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ;
3. ຮັບປະກັນຄວາມປອດໄພ, ທັນສະໄໝ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 6 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂອງ ທຫລ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ, ເຕັກໂນໂລຊີ, ການຄົ້ນຄວ້າ ວິທະຍາສາດ, ການພັດທະນາຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ

**ມາດຕາ 7 ທີ່ຕັ້ງ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ແມ່ນ ອົງການລັດທຽບເທົ່າກະຊວງ ຊຶ່ງສັງກັດໃນໂຄງປະກອບກົງຈັກຂອງລັດຖະບານ, ມີຖານະເປັນ ນິຕິບຸກຄົນ ແລະ ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 8 (ປັບປຸງ) ພາລະບົດບາດ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ ໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ຄຸ້ມຄອງລະບົບການຊຳລະ ໃຫ້ມີ ຄວາມເຂັ້ມແຂງ ແລະ ທັນສະໄໝ ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 9 (ປັບປຸງ) ສິດ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ມີສິດ ດັ່ງນີ້:

1. ສ້າງ ແລະ ຍົກເລີກ ນິຕິກຳ ໃນຂອບເຂດສິດຂອງຕົນ;
2. ຄົ້ນຄວ້າອອກແບບ ແລະ ກຳນົດຄຸນລັກສະນະຕ່າງໆຂອງເງິນ ເພື່ອສະເໜີລັດຖະບານ ພິຈາລະນາ;
3. ພິມເງິນ ຕາມແບບ ແລະ ຄຸນລັກສະນະ ທີ່ລັດຖະບານອະນຸມັດ;
4. ພິມຈຳໜ່າຍເງິນ ອອກສູ່ຂອດຈໍລະຈອນ;
5. ເຄື່ອນຍ້າຍ ທະນະບັດ ແລະ ເງິນຫຼຽນ;
6. ແລກປ່ຽນ ແລະ ທຳລາຍ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ;
7. ຖອນ ແລະ ປ່ຽນແທນ ເງິນໃນຂອດຈໍລະຈອນ ຕາມການອະນຸມັດຂອງລັດຖະບານ;
8. ອອກ ແລະ ຈຳໜ່າຍ ພັນທະບັດ ແລະ ເອກະສານມີຄ່າອື່ນ ຂອງ ທຫລ ເພື່ອປະຕິບັດນະໂຍບາຍ ເງິນຕາ;
9. ໃຫ້ກູ້ຢືມເປັນແຫຼ່ງສຸດທ້າຍ ແກ່ສະຖາບັນການເງິນ ເພື່ອແກ້ໄຂການຂາດສະພາບຄ່ອງຂອງ ສະຖາບັນການເງິນ ໂດຍສອດຄ່ອງກັບແຜນເງິນຕາແຫ່ງຊາດ ແລະ ກົດໝາຍ;
10. ອອກ, ຕໍ່ອາຍຸ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ຂອງສະຖາບັນການເງິນ ແລະ ຫົວໜ່ວຍອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລະ ໂຈະການດຳເນີນທຸລະກິດດັ່ງກ່າວ ຕາມກົດໝາຍທີ່ກ່ຽວຂ້ອງ;
11. ນຳໃຊ້ມາດຕະການຕໍ່ສະຖາບັນການເງິນ ແລະ ຫົວໜ່ວຍອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

12. ທວງເອົາຂໍ້ມູນນຳ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຮັບໃຊ້ເຂົ້າໃນການປະຕິບັດໜ້າທີ່ຂອງຕົນ;

13. ສະເໜີລັດຖະບານ ພິຈາລະນາອະນຸຍາດ ສ້າງຕັ້ງ ຫຼື ຍຸບເລີກ ກົງຈັກຊ່ວຍວຽກຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້;

14. ສະເໜີລັດຖະບານ ພິຈາລະນາອະນຸຍາດ ສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ;

15. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 (ປັບປຸງ) ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານ ຂອງ ທຫລ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ແຜນຍຸດທະສາດ ເປັນ ແຜນການ, ແຜນງານ, ໂຄງການ ຂອງ ທຫລ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ບັນດານິຕິກຳ ໃນຂະແໜງການທະນາຄານ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ;

4. ປະຕິບັດນະໂຍບາຍເງິນຕາ ດ້ວຍການນຳໃຊ້ເຄື່ອງມື ແລະ ມາດຕະການ ໃຫ້ເໝາະສົມກັບສະພາບການໃນແຕ່ລະໄລຍະ;

5. ຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

6. ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີປະສິດທິພາບ;

7. ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຂອງສະຖາບັນການເງິນ, ວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ, ຫົວໜ່ວຍສະໜັບສະໜູນສະຖຽນລະພາບດ້ານການເງິນ ແລະ ວຽກງານປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ;

8. ຄຸ້ມຄອງ ແລະ ກວດກາ ລະບົບການຊຳລະ ໃຫ້ມີຄວາມ ເຂັ້ມແຂງ, ປອດໄພ, ທັນສະໄໝ ແລະ ມີປະສິດທິພາບ;

9. ບໍລິການບັນຊີເງິນຝາກ ແລະ ຊຳລະສະສາງ ໃຫ້ແກ່ລັດຖະບານ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ;

10. ຈັດຕັ້ງການຈຳໜ່າຍ, ການ ຊື້ ຂາຍ ແລະ ການຫັກບັນຊີ ພັນທະບັດຂອງລັດຖະບານ ຫຼື ພັນທະບັດ ທີ່ລັດຖະບານເປັນຜູ້ຄ້ຳປະກັນ ຕາມລະບຽບການທີ່ກ່ຽວຂ້ອງ;

11. ຄົ້ນຄວ້າປະກອບຄຳເຫັນໃຫ້ແກ່ລັດຖະບານ ໃນການກູ້ຢືມເປັນເງິນຕາຕ່າງປະເທດ ຢູ່ພາຍໃນ ແລະ ຕ່າງປະເທດ;

12. ພັດທະນາວຽກງານຄົ້ນຄວ້າ, ສັງລວມ ແລະ ວິໄຈ ຂໍ້ມູນ ຂ່າວສານ ທາງດ້ານເສດຖະກິດ, ການເງິນ, ເງິນຕາ ແລະ ການເຄື່ອນໄຫວຂອງສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;

13. ເປັນຕົວແທນໃຫ້ລັດຖະບານ ຢູ່ໃນອົງການຈັດຕັ້ງການເງິນສາກົນ, ພົວພັນ, ຮ່ວມມື ແລະ ເຊັນສັນຍາກ່ຽວກັບວຽກງານການເງິນ, ເງິນຕາ ກັບຕ່າງປະເທດ ແລະ ອົງການຈັດຕັ້ງການເງິນສາກົນ ຕາມການມອບໝາຍຂອງລັດຖະບານ;

14. ສ້າງ, ປັບປຸງ, ຄຸ້ມຄອງ ແລະ ພັດທະນາ ລະບົບບັນຊີ ຂອງ ທຫລ ແລະ ສະຖາບັນການເງິນ;

15. ປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານມີຄວາມກົມກຽວກັນ;

16. ລາຍງານການເຄື່ອນໄຫວວຽກງານຂອງຕົນ ແລະ ບາງບັນຫາພົ້ນເດັ່ນທາງດ້ານເສດຖະກິດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

17. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ III
# ໂຄງປະກອບການຈັດຕັ້ງ ຂອງທະນາຄານແຫ່ງ ສປປ ລາວ

### ມາດຕາ 11 ໂຄງປະກອບການຈັດຕັ້ງ ຂອງທະນາຄານແຫ່ງ ສປປ ລາວ

ທຫລ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສະພາບໍລິຫານ;
2. ຄະນະກຳມະການ;
3. ຜູ້ວ່າການ ແລະ ຮອງຜູ້ວ່າການ;
4. ກົງຈັກຊ່ວຍວຽກ ແລະ ພະນັກງານ.

## ໝວດທີ 1
## ສະພາບໍລິຫານ

### ມາດຕາ 12 (ປັບປຸງ) ສະພາບໍລິຫານ

ສະພາບໍລິຫານ ແມ່ນ ການຈັດຕັ້ງບໍລິຫານສູງສຸດຂອງ ທຫລ.

ສະມາຊິກສະພາບໍລິຫານ ມີອາຍຸການ ຫ້າປີ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

### ມາດຕາ 13 (ປັບປຸງ) ໂຄງປະກອບຂອງສະພາບໍລິຫານ

ສະພາບໍລິຫານ ປະກອບດ້ວຍ ສະມາຊິກ ແຕ່ ເຈັດ ຫາ ສິບເອັດ ຄົນ ໃນນັ້ນມີ:

1. ຜູ້ວ່າການ ເປັນປະທານ;
2. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
3. ຮອງຜູ້ວ່າການຜູ້ໜຶ່ງ ເປັນຮອງປະທານ;
4. ຮອງຜູ້ວ່າການອີກຜູ້ໜຶ່ງ ເປັນກຳມະການ;
5. ຕົວແທນຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂົງເຂດ ເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດ, ສະຖາບັນການສຶກສາ ເປັນກຳມະການ.

**ມາດຕາ 14 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ມີປະສົບການ ແລະ ໄດ້ຮັບຄວາມເຊື່ອຖື ຈາກຂົງເຂດການເງິນ, ເງິນຕາ ແລະ ຂະແໜງວິຊາສະເພາະອື່ນທີ່ກ່ຽວຂ້ອງ;

2. ບໍ່ເປັນສະມາຊິກຂອງສະພາບໍລິຫານ ຫຼື ຜູ້ອຳນວຍການ ຂອງສະຖາບັນການເງິນໃດໜຶ່ງ;

3. ມີ ຜົວ ຫຼື ເມຍ, ພໍ່, ແມ່, ລູກ ທີ່ບໍ່ແມ່ນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີສິດຜົນປະໂຫຍດສຳຄັນໃນສະຖາບັນການເງິນໃດໜຶ່ງ;

4. ບໍ່ເຄີຍເປັນຜູ້ບໍລິຫານໃນວິສາຫະກິດ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ;

6. ແຈ້ງຊັບສິນ ຕາມກົດໝາຍ;

7. ມີມາດຕະຖານ ແລະ ເງື່ອນໄຂອື່ນ ຕາມການກຳນົດຂອງລັດຖະບານ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງຮ່າງແຜນເງິນຕາແຫ່ງຊາດ ຕາມການສະເໜີຂອງຄະນະກຳມະການນະໂຍບາຍເງິນຕາ ແລ້ວສະເໜີລັດຖະບານ ພິຈາລະນາ ເພື່ອສະເໜີຕໍ່ ສະພາແຫ່ງຊາດ ຮັບຮອງ;

2. ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ, ແຜນການເຄື່ອນໄຫວວຽກງານໃນປີຕໍ່ໄປ ແລະ ວຽກງານສຳຄັນ ຂອງ ທຫລ;

3. ຮັບຮອງເອົາທິດທາງໃນການປະຕິບັດນະໂຍບາຍເງິນຕາ;

4. ຮັບຮອງເອົາ ການດັດແກ້ແຜນງົບປະມານ, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແລະ ແຜນງົບປະມານສຳລັບປີຕໍ່ໄປ ຂອງ ທຫລ ເພື່ອສະເໜີນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;

5. ບໍລິຫານ ແລະ ຈັດແບ່ງຜົນໄດ້ຮັບສຸດທິປະຈຳປີ ເພື່ອສະເໜີນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;

6. ຮັບຮອງໂຄງປະກອບກົງຈັກຂັ້ນກົມ, ອົງການລັດທຽບເທົ່າກົມ, ທຫລ ປະຈຳພາກ ແລະ ຫ້ອງການຜູ້ຕາງໜ້າ ທຫລ ລວມທັງແຜນການປະກອບບຸກຄະລາກອນ ຂອງ ທຫລ;

7. ແຕ່ງຕັ້ງ ແລະ ປົດຕຳແໜ່ງ ສະມາຊິກ ຄະນະກຳມະການສະຖຽນລະພາບດ້ານການເງິນ, ຄະນະກຳມະການລະບົບການຊຳລະ, ຄະນະກຳມະການກວດກາ, ຄະນະກຳມະການອື່ນ ແລະ ຄະນະຊ່ວຍວຽກທີ່ຈຳເປັນຂອງຕົນ ຕາມການສະເໜີຂອງຜູ້ວ່າການ;

8. ຮັບຮອງເງິນເດືອນ, ເງິນແຮງງານ, ນະໂຍບາຍອຸດໜູນ ແລະ ສະຫວັດດີການ ຂອງພະນັກງານ ທຫລ ເພື່ອສະເໜີນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 (ປັບປຸງ) ກອງປະຊຸມສະພາບໍລິຫານ**

ສະພາບໍລິຫານ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມສະພາບໍລິຫານ ປະກອບດ້ວຍກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ຈັດຂຶ້ນ ສາມເດືອນ ຕໍ່ຄັ້ງ ຕາມການຮຽກໂຮມຂອງປະທານ. ວາລະກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາບໍລິຫານລ່ວງໜ້າ ເປັນລາຍລັກອັກສອນ ຢ່າງໜ້ອຍ ຫ້າວັນ ກ່ອນວັນເປີດກອງປະຊຸມ. ກອງປະຊຸມສະພາບໍລິຫານ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມວິສາມັນເວລາໃດກໍໄດ້ ຕາມການຮຽກໂຮມ ຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ຢ່າງໜ້ອຍ ສາມຄົນ.

ກອງປະຊຸມສະພາບໍລິຫານ ຕົກລົງບັນຫາດ້ວຍການອອກເປັນມະຕິ ໂດຍຖືເອົາສຽງສ່ວນຫຼາຍຂອງ ສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 17 (ປັບປຸງ) ການສິ້ນສຸດການເປັນສະມາຊິກສະພາບໍລິຫານ**

ການເປັນສະມາຊິກສະພາບໍລິຫານ ຈະສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດອາຍຸການ;
2. ລາອອກ ໂດຍໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ;
3. ຖືກຍົກຍ້າຍ, ປົດຕຳແໜ່ງ ຫຼື ບໍ່ໄດ້ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
4. ປະຕິບັດບໍ່ຖືກ ມາດຕະຖານ ແລະ ເງື່ອນໄຂ ໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງ ກົດໝາຍສະບັບນີ້;
5. ເສຍຊີວິດ.

ໃນກໍລະນີຈຳນວນສະມາຊິກສະພາບໍລິຫານ ຫາກວ່າງລົງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຫາ ຂໍ້ 5 ຂອງມາດຕານີ້ ຜູ້ວ່າການ ຕ້ອງສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງຜູ້ໃໝ່ແທນ.

## ໝວດທີ 2
## ຄະນະກຳມະການ

**ມາດຕາ 18 (ປັບປຸງ) ຄະນະກຳມະການ**

ທຫລ ປະກອບດ້ວຍ ຄະນະກຳມະການ ດັ່ງນີ້:

1. ຄະນະກຳມະການນະໂຍບາຍເງິນຕາ;
2. ຄະນະກຳມະການສະຖຽນລະພາບດ້ານການເງິນ;
3. ຄະນະກຳມະການລະບົບການຊຳລະ;
4. ຄະນະກຳມະການກວດກາ;
5. ຄະນະກຳມະການອື່ນ ຕາມຄວາມຈຳເປັນຂອງວຽກງານ.

**ມາດຕາ 19 (ໃໝ່) ມາດຕະຖານ ແລະ ເງື່ອນໄຂ ຂອງສະມາຊິກຄະນະກຳມະການ**

ສະມາຊິກຄະນະກຳມະການ ມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ບົດຮຽນ ໃນຂົງເຂດ ເສດຖະກິດ, ການເງິນ, ເງິນຕາ ແລະ ຂົງເຂດອື່ນ ທີ່ກ່ຽວຂ້ອງກັບວຽກງານຂອງແຕ່ລະຄະນະກຳມະການ;
2. ມີທັດສະນະຫຼັກໝັ້ນ, ປອດໃສ ແລະ ຮັກສາຄວາມລັບ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ;
3. ບໍ່ເຄີຍເປັນຜູ້ບໍລິຫານໃນວິສາຫະກິດ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;

4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ, ຟອກເງິນ ຫຼື ການກະທຳຜິດອື່ນ ໂດຍເຈດຕະນາ;

5. ແຈ້ງຊັບສິນ ຕາມກົດໝາຍ;

6. ມີມາດຕະຖານ ແລະ ເງື່ອນໄຂອື່ນ ຕາມການກຳນົດຂອງລັດຖະບານ.

**ມາດຕາ 20 (ປັບປຸງ) ຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ແມ່ນ ກົງຈັກໜຶ່ງຂອງ ທຫລ ຊຶ່ງປະກອບດ້ວຍ ສະມາຊິກ ຢ່າງໜ້ອຍ ເຈັດຄົນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

**ມາດຕາ 21 ໂຄງປະກອບຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ປະກອບດ້ວຍ:

1. ຜູ້ວ່າການ ເປັນປະທານ;
2. ຮອງຜູ້ວ່າການ ເປັນຮອງປະທານ;
3. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
4. ກຳມະການຈຳນວນໜຶ່ງ ທີ່ມາຈາກ ທຫລ, ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍເງິນຕາ ແລະ ແຜນເງິນຕາແຫ່ງຊາດ ເພື່ອສະເໜີສະພາບໍລິຫານ ພິຈາລະນາ;
2. ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາຂອງ ທຫລ;
3. ມີຄຳເຫັນຕໍ່ການສ້າງນິຕິກຳ ກ່ຽວກັບວຽກງານຈັດຕັ້ງປະຕິບັດນະໂຍບາຍເງິນຕາ;
4. ເຂົ້າຮ່ວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕໍ່ກອງປະຊຸມສະພາບໍລິຫານ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 (ໃໝ່) ຄະນະກຳມະການສະຖຽນລະພາບດ້ານການເງິນ**

ຄະນະກຳມະການສະຖຽນລະພາບດ້ານການເງິນ ແມ່ນ ກົງຈັກໜຶ່ງຂອງ ທຫລ ຊຶ່ງປະກອບດ້ວຍ ສະມາຊິກ ຢ່າງໜ້ອຍ ເຈັດຄົນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ.

**ມາດຕາ 24 (ໃໝ່) ໂຄງປະກອບຂອງຄະນະກຳມະການສະຖຽນລະພາບດ້ານການເງິນ**

ຄະນະກຳມະການສະຖຽນລະພາບດ້ານການເງິນ ປະກອບດ້ວຍ:

1. ຮອງຜູ້ວ່າການ ເປັນປະທານ;
2. ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ເປັນຮອງປະທານ;
3. ກຳມະການຈຳນວນໜຶ່ງ ທີ່ມາຈາກ ທຫລ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 25 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການສະຖຽນລະພາບດ້ານການເງິນ**

ຄະນະກຳມະການສະຖຽນລະພາບດ້ານການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນານະໂຍບາຍ ໃນການຄຸ້ມຄອງ ແລະ ການພັດທະນາ ສະຖາບັນການເງິນ ເພື່ອນຳສະເໜີສະພາບໍລິຫານ ຮັບຮອງ;

2. ພິຈາລະນາເຄື່ອງມືຕ່າງໆໃນການຄຸ້ມຄອງຄວາມໝັ້ນຄົງ ຂອງສະຖາບັນການເງິນ;

3. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດນະໂຍບາຍຮັກສາສະຖຽນລະພາບດ້ານການເງິນ;

4. ມີຄຳເຫັນຕໍ່ການສ້າງນິຕິກຳ ກ່ຽວກັບວຽກງານສະຖຽນລະພາບດ້ານການເງິນ;

5. ເຂົ້າຮ່ວມ ແລະ ລາຍງານຜົນການຄຸ້ມຄອງສະຖາບັນການເງິນ ແລະ ຫົວໜ່ວຍສະໜັບສະໜູນສະຖຽນລະພາບດ້ານການເງິນ ຕໍ່ກອງປະຊຸມສະພາບໍລິຫານ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 (ໃໝ່) ຄະນະກຳມະການລະບົບການຊຳລະ**

ຄະນະກຳມະການລະບົບການຊຳລະ ແມ່ນ ກົງຈັກໜຶ່ງຂອງ ທຫລ ຊຶ່ງປະກອບດ້ວຍ ສະມາຊິກ ຢ່າງໜ້ອຍເຈັດຄົນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ.

**ມາດຕາ 27 (ໃໝ່) ໂຄງປະກອບຂອງຄະນະກຳມະການລະບົບການຊຳລະ**

ຄະນະກຳມະການລະບົບການຊຳລະ ປະກອບດ້ວຍ:

1. ຮອງຜູ້ວ່າການ ເປັນປະທານ;

2. ຫົວໜ້າກົມຄຸ້ມຄອງລະບົບການຊຳລະ ເປັນຮອງປະທານ;

3. ກຳມະການຈຳນວນໜຶ່ງ ທີ່ມາຈາກ ທຫລ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການລະບົບການຊຳລະ**

ຄະນະກຳມະການລະບົບການຊຳລະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ນະໂຍບາຍ ແລະ ທິດທາງ ການພັດທະນາລະບົບການຊຳລະ ເພື່ອສະເໜີຕໍ່ສະພາບໍລິຫານ ຮັບຮອງ;

2. ພິຈາລະນາຮັບຮອງເຄື່ອງມືການຊຳລະ ໃຫ້ສອດຄ່ອງກັບມາດຕະຖານ ແລະ ແຜນພັດທະນາລະບົບການຊຳລະ ແຕ່ລະໄລຍະ;

3. ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດແຜນພັດທະນາລະບົບການຊຳລະ;

4. ມີຄຳເຫັນຕໍ່ການສ້າງນິຕິກຳ ກ່ຽວກັບວຽກງານລະບົບການຊຳລະ;

5. ເຂົ້າຮ່ວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານລະບົບການຊຳລະ ຕໍ່ກອງປະຊຸມສະພາບໍລິຫານ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 (ປັບປຸງ) ຄະນະກຳມະການກວດກາ**

ຄະນະກຳມະການກວດກາ ແມ່ນ ກົງຈັກໜຶ່ງຂອງ ທຫລ ຊຶ່ງປະກອບດ້ວຍ ສະມາຊິກ ຢ່າງໜ້ອຍ ຫ້າຄົນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ.

**ມາດຕາ 30 (ປັບປຸງ) ໂຄງປະກອບຂອງຄະນະກຳມະການກວດກາ**

ຄະນະກຳມະການກວດກາ ປະກອບດ້ວຍ:

1. ສະມາຊິກສະພາບໍລິຫານ ທີ່ເປັນຕົວແທນຈາກພາກສ່ວນອື່ນ ເປັນປະທານ;
2. ຮອງຜູ້ວ່າການ ທີ່ຮັບຜິດຊອບວຽກງານກວດກາ ເປັນຮອງປະທານ;
3. ກຳມະການຈຳນວນໜຶ່ງ ທີ່ມາຈາກ ທຫລ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາ**

ຄະນະກຳມະການກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ;
2. ກວດກາຄວາມຖືກຕ້ອງຂອງເອກະສານລາຍງານການເງິນ;
3. ກວດກາປະສິດທິຜົນຂອງການດຳເນີນງານ;
4. ກວດກາການຈັດຕັ້ງປະຕິບັດວຽກງານກວດກາຂອງ ທຫລ;
5. ກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາບໍລິຫານ, ເຂົ້າຮ່ວມ ແລະ ລາຍງານຜົນການກວດກາ ຕໍ່ກອງປະຊຸມສະພາບໍລິຫານ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 (ໃໝ່) ອາຍຸການຂອງສະມາຊິກຄະນະກຳມະການ**

ສະມາຊິກຄະນະກຳມະການ ມີອາຍຸການ ຫ້າປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ ຕາມການສະເໜີຂອງຜູ້ວ່າການ.

**ມາດຕາ 33 (ໃໝ່) ກອງປະຊຸມຄະນະກຳມະການ**

ຄະນະກຳມະການ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມຄະນະກຳມະການ ປະກອບດ້ວຍກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ຈັດຂຶ້ນຕາມເວລາ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ. ວາລະກອງປະຊຸມຕ້ອງແຈ້ງໃຫ້ສະມາຊິກຄະນະກຳມະການລ່ວງໜ້າ ເປັນລາຍລັກອັກສອນ ຢ່າງໜ້ອຍ ຫ້າວັນ ກ່ອນວັນເປີດກອງປະຊຸມ. ກອງປະຊຸມຄະນະກຳມະການ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກຄະນະກຳມະການ ເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດຈັດກອງປະຊຸມວິສາມັນເວລາໃດກໍໄດ້ ຕາມການຮຽກໂຮມຂອງປະທານ ຫຼື ການສະເໜີຂອງສະມາຊິກຄະນະກຳມະການ ຢ່າງໜ້ອຍ ສອງຄົນ.

ກອງປະຊຸມຄະນະກຳມະການ ຕົກລົງບັນຫາດ້ວຍການອອກເປັນມະຕິ ໂດຍຖືເອົາສຽງສ່ວນຫຼາຍຂອງສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 34 (ໃໝ່) ການສິ້ນສຸດການເປັນສະມາຊິກຄະນະກຳມະການ**

ການເປັນສະມາຊິກຄະນະກຳມະການ ຈະສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດອາຍຸການ;
2. ລາອອກ ໂດຍໄດ້ຮັບອະນຸຍາດຈາກຜູ້ມີສິດແຕ່ງຕັ້ງ ແລະ ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

3. ຖືກຍົກຍ້າຍ, ປົດຕຳແໜ່ງ ຫຼື ບໍ່ໄດ້ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;

4. ປະຕິບັດບໍ່ຖືກ ມາດຕະຖານ ແລະ ເງື່ອນໄຂ ໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້;

5. ເສຍຊີວິດ.

ໃນກໍລະນີຕຳແໜ່ງໃດໜຶ່ງ ຂອງຄະນະກຳມະການ ຫາກວ່າງລົງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຫາ ຂໍ້ 5 ຂອງມາດຕານີ້ ຜູ້ວ່າການ ຕ້ອງສະເໜີແຕ່ງຕັ້ງຜູ້ໃໝ່ປ່ຽນແທນ.

## ໝວດທີ 3
## ຜູ້ວ່າການ ແລະ ຮອງຜູ້ວ່າການ

### ມາດຕາ 35 ຜູ້ວ່າການ

ຜູ້ວ່າການ ເປັນສະມາຊິກລັດຖະບານ, ເປັນຜູ້ນຳພາ, ຊີ້ນຳ ບໍລິຫານວຽກງານຮອບດ້ານພາຍໃນ ທຫລ ທັງເປັນຜູ້ຕາງໜ້າຂອງ ທຫລ ໃນການພົວພັນວຽກງານ ພາຍໃນ ແລະ ຕ່າງປະເທດ.

ຜູ້ວ່າການ ຖືກແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງ ນາຍົກລັດຖະມົນຕີ ພາຍຫຼັງສະພາແຫ່ງຊາດ ຮັບຮອງ.

### ມາດຕາ 36 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ວ່າການ

ຜູ້ວ່າການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ ສະພາບໍລິຫານ ແລະ ລັດຖະບານ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານຮອບດ້ານຂອງ ທຫລ;

2. ສະເໜີແຜນເງິນຕາແຫ່ງຊາດ ໃຫ້ແກ່ລັດຖະບານ;

3. ນຳໃຊ້ເຄື່ອງມືນະໂຍບາຍເງິນຕາ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາ ໃຫ້ເໝາະສົມກັບ ສະພາບເສດຖະກິດ ໃນແຕ່ລະໄລຍະ;

4. ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີປະສິດທິພາບ;

5. ອະນຸມັດຈຳນວນເງິນທີ່ຈະພິມຈຳໜ່າຍ ແລະ ທຳລາຍ ໃນແຕ່ລະຄັ້ງ;

6. ສະເໜີສ້າງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຂອງຂະແໜງການທະນາຄານ ຕໍ່ລັດຖະບານ;

7. ສ້າງ ແລະ ຍົກເລີກ ນິຕິກຳ ຕາມຂອບເຂດສິດຂອງຕົນ;

8. ອອກ, ຕໍ່ອາຍຸ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນ ແລະ ຫົວໜ່ວຍອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຫຼື ໂຈະການດຳເນີນທຸລະກິດດັ່ງກ່າວ ຕາມກົດໝາຍທີ່ກ່ຽວຂ້ອງ;

9. ສະເໜີສະພາບໍລິຫານ ຮັບຮອງໂຄງປະກອບກົງຈັກຂັ້ນກົມ, ອົງການລັດທຽບເທົ່າກົມ, ທຫລ ປະຈຳພາກ ແລະ ຫ້ອງການຜູ້ຕາງໜ້າ ທຫລ ລວມທັງແຜນການປະກອບບຸກຄະລາກອນຂອງ ທຫລ;

10. ອະນຸຍາດການສ້າງຕັ້ງ ແລະ ປັບປຸງ ກົງຈັກຂັ້ນພະແນກ, ອົງການລັດທຽບເທົ່າພະແນກ ລົງມາ;

11. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ ແລະ ປົດຕຳແໜ່ງ ສະມາຊິກຄະນະກຳມະການນະໂຍບາຍເງິນຕາ;

12. ສະເໜີສະພາບໍລິຫານ ແຕ່ງຕັ້ງ ແລະ ປົດຕຳແໜ່ງ ສະມາຊິກ ຄະນະກຳມະການສະຖຽນລະພາບດ້ານການເງິນ, ຄະນະກຳມະການລະບົບການຊຳລະ ແລະ ຄະນະກຳມະການກວດກາ;

13. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຮອງຜູ້ວ່າການ, ຫົວໜ້າກົມ ແລະ ຫົວໜ້າອົງການລັດທຽບເທົ່າກົມ;

14. ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ລົງມາ ພ້ອມທັງບັນຈຸພະນັກງານວິຊາການຂອງ ທຫລ;

15. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທະນາຄານ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 (ປັບປຸງ) ຮອງຜູ້ວ່າການ**

ທຫລ ປະກອບມີ ຮອງຜູ້ວ່າການ ຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

ຮອງຜູ້ວ່າການ ມີໜ້າທີ່ຊ່ວຍຜູ້ວ່າການໃນການ ນຳພາ ຊີ້ນຳ ລົງເລິກວຽກງານຈຳນວນໜຶ່ງ ຕາມການມອບໝາຍຂອງຜູ້ວ່າການ ແລະ ທັງເປັນຜູ້ຮັກສາການແທນ ໃນກໍລະນີຜູ້ວ່າການ ຕິດຂັດ ແລະ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຕາມການມອບໝາຍຂອງຜູ້ວ່າການ.

## ໝວດທີ 4
## ກົງຈັກຊ່ວຍວຽກ ແລະ ພະນັກງານ

**ມາດຕາ 38 (ປັບປຸງ) ກົງຈັກຊ່ວຍວຽກ**

ທຫລ ມີກົງຈັກຊ່ວຍວຽກ ຊຶ່ງປະກອບດ້ວຍ ກົມ, ອົງການລັດທຽບເທົ່າກົມ ຢູ່ຂັ້ນສູນກາງ, ທຫລ ປະຈຳພາກ ແລະ ຫ້ອງການຜູ້ຕາງໜ້າ ທຫລ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກຊ່ວຍວຽກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39 (ປັບປຸງ) ພະນັກງານ ຂອງທະນາຄານແຫ່ງ ສປປ ລາວ**

ພະນັກງານຂອງ ທຫລ ປະກອບດ້ວຍ ພະນັກງານ-ລັດຖະກອນ ແລະ ພາລະກອນ, ເຄື່ອນໄຫວວຽກງານ, ນຳໃຊ້ສິດ, ປະຕິບັດ ໜ້າທີ່, ພັນທະ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

ການກຳນົດລະບອບເງິນເດືອນ, ເງິນແຮງງານ, ນະໂຍບາຍອຸດໜູນ ແລະ ສະຫວັດດີການ ຂອງພະນັກງານ ທຫລ ໃຫ້ປະຕິບັດຕາມການຮັບຮອງຂອງສະພາບໍລິຫານ ແລະ ການອະນຸມັດຂອງນາຍົກລັດຖະມົນຕີ.

## ພາກທີ IV
## ການເຄື່ອນໄຫວວຽກງານ ຂອງທະນາຄານແຫ່ງ ສປປ ລາວ
## ໝວດທີ 1
## ເງິນຕາແຫ່ງຊາດ

**ມາດຕາ 40 (ປັບປຸງ) ຫົວໜ່ວຍເງິນຕາຂອງ ສປປ ລາວ**

ເງິນຕາຂອງ ສປປ ລາວ ແມ່ນ ເງິນກີບ ຂຽນຫຍໍ້ເປັນພາສາລາວ “ກີບ” ແລະ ເປັນພາສາສາກົນ “LAK”, ມີຫົວໜ່ວຍເປັນກີບ, ໜຶ່ງກີບ ເທົ່າກັບ ໜຶ່ງຮ້ອຍອັດ.

**ມາດຕາ 41 (ປັບປຸງ) ການພິມເງິນ**

ທຫລ ເປັນຜູ້ຄົ້ນຄວ້າອອກແບບ, ກຳນົດສ່ວນປະກອບ, ຮູບພາບ ແລະ ປະເພດເງິນ ເພື່ອສະເໜີລັດຖະບານພິຈາລະນາອະນຸມັດ.

ທຫລ ເປັນຜູ້ຈັດພິມເງິນ ແຕ່ພຽງຜູ້ດຽວ ຕາມແບບທີ່ໄດ້ຮັບອະນຸມັດຈາກລັດຖະບານ. ໃນການພິມເງິນຕ້ອງກຳນົດປະເພດ, ຈຳນວນ ແລະ ມູນຄ່າ ຢ່າງຈະແຈ້ງ.

ທຫລ ຕ້ອງຮັບປະກັນຄວາມປອດໄພຂອງ ໂຮງພິມ, ສາງ, ແມ່ພິມທະນະບັດ, ເບົ້າຫຼໍ່ເງິນຫຼຽນ, ປໍ້ເລກລະຫັດ, ລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ ແລະ ອຸປະກອນອື່ນ ທີ່ຮັບໃຊ້ການພິມເງິນ ພ້ອມທັງຮັກສາເງິນທີ່ຍັງບໍ່ທັນໄດ້ພິມຈຳໜ່າຍສູ່ຂອດຈໍລະຈອນ.

**ມາດຕາ 42 ການພິມທະນະບັດ ແລະ ຫຼຽນ ທີ່ລະນຶກ**

ທຫລ ສາມາດ ພິມທະນະບັດ ແລະ ຫຼຽນ ທີ່ລະນຶກ ເນື່ອງໃນໂອກາດການສະເຫຼີມສະຫຼອງອັນສຳຄັນທາງດ້ານການເມືອງ, ປະຫວັດສາດ, ວິທະຍາສາດ, ວັດທະນະທຳ-ສັງຄົມ ຫຼື ເຫດການສຳຄັນຂອງຊາດ ແລະ ສາກົນ ຕາມການອະນຸມັດຂອງລັດຖະບານ.

ທຫລ ສາມາດຈຳໜ່າຍ ທະນະບັດ ແລະ ຫຼຽນ ທີ່ລະນຶກ ດ້ວຍຕົນເອງ ຫຼື ມອບໃຫ້ການຈັດຕັ້ງ ຫຼື ນິຕິບຸກຄົນໃດໜຶ່ງ ຈຳໜ່າຍແທນ.

**ມາດຕາ 43 (ປັບປຸງ) ການພິມຈຳໜ່າຍເງິນ**

ການພິມຈຳໜ່າຍເງິນ ແມ່ນ ການນຳເອົາເງິນທີ່ໄດ້ພິມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ ອອກສູ່ຂອດຈໍລະຈອນ.

ເງິນທີ່ ທຫລ ພິມຈຳໜ່າຍອອກສູ່ຂອດຈໍລະຈອນ ແມ່ນ ເງິນຕາຂອງ ສປປ ລາວ ທີ່ຖືກຕ້ອງຕາມກົດໝາຍ ແລະ ສາມາດນຳໃຊ້ເຂົ້າໃນການຊຳລະ ໃນຂອບເຂດທົ່ວປະເທດ.

**ມາດຕາ 44 (ປັບປຸງ) ການຖອນເງິນ ຄືນຈາກຂອດຈໍລະຈອນ**

ທຫລ ສາມາດຖອນເງິນຄືນຈາກຂອດຈໍລະຈອນ ໂດຍໄດ້ຮັບການເຫັນດີຈາກລັດຖະບານ. ການຖອນເງິນຄືນນັ້ນ ຕ້ອງແຈ້ງໃຫ້ມວນຊົນຮັບຊາບ. ຜູ້ມີເງິນ ທີ່ຖືກປະກາດຖອນຄືນຈາກຂອດຈໍລະຈອນນັ້ນ ມີສິດປ່ຽນເອົາເງິນນຳ ທຫລ ຫຼື ທະນາຄານທຸລະກິດ ອີງຕາມມູນຄ່າຂອງເງິນ ທີ່ຕົນຖືຄອງ. ໃນການປ່ຽນເງິນນີ້ ບໍ່ໃຫ້ເກັບຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 45 (ປັບປຸງ) ການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ**

ທຫລ ເປັນຜູ້ກຳນົດມາດຕະຖານ ແລະ ເງື່ອນໄຂການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ເຊັ່ນ ຖືກເຈາະ, ຖືກຕັດ, ແຕກ, ຫັກ, ມີຮອຍຂີດຂຽນ, ບໍ່ມີຄຸນລັກສະນະຂອງເງິນ ຫຼື ມີຮູບພາບທີ່ບໍ່ສາມາດຈຳແນກໄດ້.

ການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ສາມາດດຳເນີນຜ່ານ ທຫລ ຫຼື ທະນາຄານທຸລະກິດ. ເງື່ອນໄຂຂອງການແລກປ່ຽນ ທະນະບັດ ແລະ ເງິນຫຼຽນດັ່ງກ່າວ ຕ້ອງປະກາດໃຫ້ມວນຊົນຮັບຊາບ.

ມາດຕະຖານ ແລະ ເງື່ອນໄຂ ຂອງການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 46 (ໃໝ່) ການເຄື່ອນຍ້າຍ ທະນະບັດ ແລະ ເງິນຫຼຽນ**

ທຫລ ເປັນຜູ້ຈັດຕັ້ງການເຄື່ອນຍ້າຍ ທະນະບັດ ແລະ ເງິນຫຼຽນ ດ້ວຍຕົນເອງ ຫຼື ມອບໃຫ້ນິຕິບຸກຄົນໃດໜຶ່ງ ທີ່ໄດ້ຮັບອະນຸຍາດຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ຂັ້ນຕອນ ແລະ ວິທີການ ເຄື່ອນຍ້າຍທະນະບັດ ແລະ ເງິນຫຼຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 47 ການທຳລາຍ ທະນະບັດ ແລະ ເງິນຫຼຽນ**

ທຫລ ເປັນຜູ້ທຳລາຍ ທະນະບັດ ແລະ ເງິນຫຼຽນ ທີ່ໄດ້ຖອນຄືນຈາກຂອດຈໍລະຈອນ ແລະ ເສື່ອມຄຸນນະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ແລະ 45 ຂອງກົດໝາຍສະບັບນີ້.

ຂັ້ນຕອນ ແລະ ວິທີການ ທຳລາຍ ທະນະບັດ ແລະ ເງິນຫຼຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການປະຕິບັດນະໂຍບາຍເງິນຕາ

**ມາດຕາ 48 (ປັບປຸງ) ນະໂຍບາຍເງິນຕາ**

ນະໂຍບາຍເງິນຕາ ແມ່ນ ນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກທາງດ້ານເງິນຕາ ດ້ວຍການນຳໃຊ້ເຄື່ອງມືນະໂຍບາຍເງິນຕາທີ່ເໝາະສົມ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາ.

ທຫລ ປະຕິບັດນະໂຍບາຍເງິນຕາ ໂດຍມີການປະສານສົມທົບ ກັບນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກດ້ານອື່ນ ຢ່າງກົມກຽວ.

**ມາດຕາ 49 ເຄື່ອງມືນະໂຍບາຍເງິນຕາ**

ເຄື່ອງມືນະໂຍບາຍເງິນຕາ ປະກອບດ້ວຍ:

1. ອັດຕາດອກເບ້ຍ;
2. ເງິນແຮຝາກບັງຄັບ;
3. ອັດຕາແລກປ່ຽນ;
4. ການດຳເນີນຕະຫຼາດເປີດ;
5. ການສະໜອງທຶນ;
6. ເຄື່ອງມືອື່ນ ຕາມການກຳນົດຂອງ ທຫລ.

ທຫລ ເປັນຜູ້ກຳນົດກົນໄກ ແລະ ລະບຽບການ ໃນການນຳໃຊ້ເຄື່ອງມືນະໂຍບາຍເງິນຕາແຕ່ລະປະເພດ.

**ມາດຕາ 50 ອັດຕາດອກເບ້ຍ**

ທຫລ ເປັນຜູ້ກຳນົດ ແລະ ປະກາດໃຊ້ ອັດຕາດອກເບ້ຍພື້ນຖານ, ອັດຕາດອກເບ້ຍສະໜອງທຶນ ແລະ ອັດຕາດອກເບ້ຍເງິນກູ້ລະຫວ່າງທະນາຄານ ເພື່ອຈັດຕັ້ງປະຕິບັດນະໂຍບາຍເງິນຕາ. ສ່ວນການກຳນົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຂອງສະຖາບັນການເງິນ ແກ່ລູກຄ້າທົ່ວໄປນັ້ນ ໃຫ້ປະຕິບັດຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ.

**ມາດຕາ 51 (ປັບປຸງ) ເງິນແຮຝາກບັງຄັບ**

ເງິນແຮຝາກບັງຄັບ ແມ່ນ ຈຳນວນເງິນທີ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ຕ້ອງຝາກໄວ້ຢູ່ ທຫລ.

ທຫລ ເປັນຜູ້ກຳນົດອັດຕາສ່ວນ ແລະ ໂຄງປະກອບເງິນແຮຝາກບັງຄັບ ໃນແຕ່ລະໄລຍະ.

**ມາດຕາ 52 (ປັບປຸງ) ອັດຕາແລກປ່ຽນ**

ທຫລ ເປັນຜູ້ກຳນົດ ລະບອບ ແລະ ກົນໄກການຄຸ້ມຄອງ ອັດຕາແລກປ່ຽນ ທີ່ມີການຄຸ້ມຄອງຂອງລັດ ບົນພື້ນຖານຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ເພື່ອເຮັດໃຫ້ອັດຕາແລກປ່ຽນມີສະຖຽນລະພາບ.

**ມາດຕາ 53 (ປັບປຸງ) ການດຳເນີນຕະຫຼາດເປີດ**

ຕະຫຼາດເປີດ ແມ່ນ ຕະຫຼາດ ຊື້ ຂາຍ ເອກະສານມີຄ່າ ລະຫວ່າງ ທຫລ ແລະ ສະຖາບັນການເງິນ.

ທຫລ ເປັນຜູ້ຈັດຕັ້ງ, ດຳເນີນ ແລະ ຄຸ້ມຄອງ ການເຄື່ອນໄຫວຕະຫຼາດເປີດ ລວມທັງກຳນົດປະເພດ ເອກະສານມີຄ່າ ທີ່ສາມາດ ຊື້ ຂາຍ ໃນຕະຫຼາດ ແລະ ດຳເນີນການ ຊື້ ຂາຍ ໃນຕະຫຼາດຮ່ວມກັບສະມາຊິກຂອງ ຕະຫຼາດເປີດ.

**ມາດຕາ 54 (ປັບປຸງ) ການສະໜອງທຶນ**

ທຫລ ສາມາດສະໜອງທຶນໃຫ້ແກ່ສະຖາບັນການເງິນ ເພື່ອຮັບປະກັນການຊຳລະ ແລະ ແກ້ໄຂການ ຂາດສະພາບຄ່ອງ ຂອງສະຖາບັນການເງິນ ດ້ວຍການໃຫ້ກູ້ຢືມ.

ທຫລ ເປັນຜູ້ກຳນົດລະບຽບການ ກ່ຽວກັບການສະໜອງທຶນ.

**ມາດຕາ 55 (ປັບປຸງ) ການກູ້ຢືມ**

ທຫລ ສາມາດກູ້ຢືມເປັນເງິນຕາຕ່າງປະເທດ ເພື່ອຈຸດປະສົງຮັກສາສະຖຽນລະພາບເງິນຕາຂອງ ສປປ ລາວ ຕາມການເຫັນດີຂອງລັດຖະບານ.

**ມາດຕາ 56 (ປັບປຸງ) ການໃຫ້ກູ້ຢືມແກ່ສະຖາບັນການເງິນ**

ທຫລ ສາມາດໃຫ້ກູ້ຢືມແກ່ສະຖາບັນການເງິນທີ່ພົບຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ຂາດຄວາມໝັ້ນຄົງ ທີ່ອາດສົ່ງຜົນກະທົບຕໍ່ສະຖຽນລະພາບ ຂອງລະບົບສະຖາບັນການເງິນ-ເງິນຕາ.

ນອກຈາກທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ ທຫລ ກໍສາມາດໃຫ້ກູ້ຢືມແກ່ສະຖາບັນ ການເງິນໃນກໍລະນີອື່ນ ຕາມການເຫັນດີຂອງລັດຖະບານ ເປັນຕົ້ນ ການຊຸກຍູ້ການພັດທະນາເສດຖະກິດ, ການກະຈາຍແຫຼ່ງທຶນ ຕາມນະໂຍບາຍຂອງລັດ.

ທຫລ ເປັນຜູ້ກຳນົດລະບຽບການ ກ່ຽວກັບການໃຫ້ກູ້ຢືມແກ່ສະຖາບັນການເງິນ.

**ມາດຕາ 57 ການໃຫ້ກູ້ຢືມແກ່ລັດຖະບານ**

ທຫລ ສາມາດໃຫ້ກູ້ຢືມແກ່ລັດຖະບານ ເພື່ອແກ້ໄຂການຂາດດຸນງົບປະມານໄລຍະສັ້ນ ຕາມການ ເຫັນດີຂອງນາຍົກລັດຖະມົນຕີ ໃນວົງເງິນບໍ່ເກີນ ຊາວສ່ວນຮ້ອຍ ຂອງລາຍຮັບງົບປະມານແຫ່ງລັດປະຈຳປີ ແລະ ສອດຄ່ອງກັບອັດຕາສ່ວນຂອງໜີ້ສາທາລະນະ ທີ່ສະພາແຫ່ງຊາດໄດ້ຮັບຮອງ.

ການໃຫ້ກູ້ຢືມດັ່ງກ່າວ ລັດຖະບານຕ້ອງຊຳລະຄືນ ພາຍໃນປີງົບປະມານທີ່ກູ້ຢືມ.

## ໝວດທີ 3
## ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ

**ມາດຕາ 58 (ປັບປຸງ) ຄັງສຳຮອງເງິນຕາຕ່າງປະເທດ**

ຄັງສຳຮອງເງິນຕາຕ່າງປະເທດ ແມ່ນ ຊັບສິນເປັນເງິນຕາຕ່າງປະເທດ ທີ່ ທຫລ ຄຸ້ມຄອງ ຊຶ່ງປະກອບດ້ວຍ:

1. ເງິນຕາຕ່າງປະເທດ ທີ່ເປັນເງິນສົດໃນຄັງ ຫຼື ເງິນຝາກໃນບັນຊີທະນາຄານຕ່າງປະເທດ;
2. ສິດຖອນເງິນພິເສດນຳສະຖາບັນການເງິນສາກົນ ແລະ ເງິນສຳຮອງຂອງ ສປປ ລາວ ຢູ່ກອງທຶນສາກົນ;
3. ຄຳ;
4. ພັນທະບັດລັດຖະບານ ແລະ ພັນທະບັດອື່ນ ທີ່ອອກຈຳໜ່າຍ ຫຼື ຄໍ້າປະກັນໂດຍລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນ ເປັນເງິນຕາຕ່າງປະເທດສະກຸນໃດໜຶ່ງ;
5. ຊັບສິນອື່ນ ຕາມການກຳນົດຂອງລັດຖະບານ.

**ມາດຕາ 59 (ປັບປຸງ) ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ**

ທຫລ ສ້າງ ແລະ ຄຸ້ມຄອງ ຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີຄວາມປອດໄພ, ຄ່ອງຕົວ ແລະ ເຂັ້ມແຂງ, ແນໃສ່ຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ຮັກສາສະຖຽນລະພາບອັດຕາແລກປ່ຽນ ແລະ ຄວາມສາມາດໃນການຊຳລະກັບຕ່າງປະເທດ ຕາມລະບຽບການທີ່ກ່ຽວຂ້ອງ. ໃນການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ທຫລ ສາມາດ ຊື້ ຂາຍ ຊັບສິນ ຫຼື ລົງທຶນໃນຊັບສິນ ທີ່ເປັນອົງປະກອບຂອງຄັງສຳຮອງເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້.

ທຫລ ຕ້ອງລາຍງານສະພາບຄັງສຳຮອງເງິນຕາຕ່າງປະເທດໃຫ້ລັດຖະບານ ຢ່າງເປັນປົກກະຕິ. ເມື່ອເຫັນວ່າຄັງສຳຮອງເງິນຕາຕ່າງປະເທດ ມີທ່າອ່ຽງຫຼຸດລົງຜິດປົກກະຕິ ທຫລ ຕ້ອງລາຍງານຕໍ່ລັດຖະບານໂດຍດ່ວນ ພ້ອມທັງສະເໜີມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບການດັ່ງກ່າວ ແລະ ສືບຕໍ່ລາຍງານຈົນກວ່າສະພາບການຈະກັບຄືນສູ່ປົກກະຕິ.

## ໝວດທີ 4
## ການຄຸ້ມຄອງສະຖາບັນການເງິນ, ຫົວໜ່ວຍສະໜັບສະໜູນ ສະຖຽນລະພາບດ້ານການເງິນ ແລະ ລະບົບການຊຳລະ

**ມາດຕາ 60 (ປັບປຸງ) ການຄຸ້ມຄອງສະຖາບັນການເງິນ ແລະ ຫົວໜ່ວຍສະໜັບສະໜູນ ສະຖຽນລະພາບດ້ານການເງິນ**

ທຫລ ເປັນຜູ້ຄຸ້ມຄອງສະຖາບັນການເງິນ ແລະ ຫົວໜ່ວຍສະໜັບສະໜູນສະຖຽນລະພາບດ້ານການເງິນ ດ້ວຍການວາງນະໂຍບາຍ, ສ້າງແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ນິຕິກຳທີ່ກ່ຽວຂ້ອງ, ໝູນໃຊ້ຫຼັກການຄຸ້ມຄອງທີ່ດີ ລວມທັງການນຳໃຊ້ເຄື່ອງມືການຄຸ້ມຄອງຄວາມໝັ້ນຄົງສຳລັບສະຖາບັນການເງິນ ແລະ ຫົວໜ່ວຍສະໜັບສະໜູນສະຖຽນລະພາບດ້ານການເງິນ ແຕ່ລະປະເພດຢ່າງເໝາະສົມ ເພື່ອຮັບປະກັນຄວາມໝັ້ນຄົງ, ເຂັ້ມແຂງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ການບໍລິການດ້ານການເງິນ.

**ມາດຕາ 61 (ປັບປຸງ) ການຄຸ້ມຄອງລະບົບການຊໍາລະ**

ທຫລ ເປັນຜູ້ຄຸ້ມຄອງ ແລະ ພັດທະນາລະບົບການຊໍາລະ ດ້ວຍການວາງນະໂຍບາຍ, ສ້າງແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ນິຕິກໍາທີ່ກ່ຽວຂ້ອງ, ກໍານົດເຄື່ອງມືການຊໍາລະ, ມາດຕະຖານທາງດ້ານເຕັກນິກ, ກົນໄກການໄລ່ລຽງ ແລະ ການຫັກບັນຊີຂອງລະບົບການຊໍາລະ ລວມທັງ ຕິດຕາມ ກວດກາການເຄື່ອນໄຫວຂອງຜູ້ດໍາເນີນທຸລະກິດການຊໍາລະ ເພື່ອເຮັດໃຫ້ການດໍາເນີນທຸລະກິດ ມີປະສິດທິພາບ, ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ V

## ການເງິນ ແລະ ການບັນຊີ ຂອງທະນາຄານແຫ່ງ ສປປ ລາວ

### ໝວດທີ 1

### ການເງິນ ຂອງທະນາຄານແຫ່ງ ສປປ ລາວ

**ມາດຕາ 62 (ປັບປຸງ) ການເງິນ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ເປັນເຈົ້າຕົນເອງທາງດ້ານການເງິນ ໂດຍບໍ່ຂຶ້ນກັບງົບປະມານແຫ່ງລັດ. ການເງິນຂອງ ທຫລ ປະກອບດ້ວຍ ຊັບສິນ, ໜີ້ສິນ, ທຶນ ແລະ ງົບປະມານ ລວມທັງການລົງທຶນກໍ່ສ້າງໂຄງລ່າງພື້ນຖານ, ປະກອບວັດຖຸເຕັກນິກ ແລະ ການລົງທຶນໃນວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ.

**ມາດຕາ 63 (ໃໝ່) ການຄຸ້ມຄອງຊັບສິນ ຂອງທະນາຄານແຫ່ງ ສປປ ລາວ**

ຊັບສິນຂອງ ທຫລ ປະກອບດ້ວຍ ເງິນສົດ ແລະ ເງິນຝາກ ທີ່ເປັນເງິນຕາຕ່າງປະເທດ, ວັດຖຸມີຄ່າ, ເງິນໃຫ້ກູ້ຢືມ, ເງິນລົງທຶນ, ພັນທະບັດລັດຖະບານ ແລະ ພັນທະບັດຕ່າງປະເທດ ທີ່ ທຫລ ຖືຄອງ, ຊັບຄົງທີ່ ແລະ ຊັບສິນອື່ນ.

ຊັບສິນຂອງ ທຫລ ທີ່ໄດ້ມາຈາກງົບປະມານຂອງຕົນນັ້ນ ທຫລ ເປັນເຈົ້າການໃນການຄຸ້ມຄອງຊັບສິນດັ່ງກ່າວ ຢ່າງມີປະສິດທິພາບ, ປະສິດທິຜົນ ເປັນຕົ້ນ ການຊື້, ການສ້າງໃໝ່, ການຂຶ້ນທະບຽນ, ການບັນທຶກບັນຊີ, ການຕີມູນຄ່າ, ການນໍາໃຊ້, ການໃຫ້ເຊົ່າ, ການແລກປ່ຽນ, ການນໍາໄປຝາກ, ການລົງທຶນ, ການມອບ, ການຂາຍ ຫຼື ການໂອນ ລວມທັງການເກັບລາຍຮັບ ຕາມລະບຽບການຂອງ ທຫລ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ຊັບສິນຂອງ ທຫລ ທີ່ລັດປະກອບໃຫ້ນັ້ນ ຕ້ອງຂຶ້ນບັນຊີລວມສູນ ຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ, ຄຸ້ມຄອງ, ນໍາໃຊ້ ແລະ ສະສາງ ຕາມກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

ພາຍຫຼັງເອກະສານລາຍງານການເງິນຂອງ ທຫລ ໄດ້ຮັບການກວດສອບຈາກອົງການກວດສອບແຫ່ງລັດ ຫາກສະແດງໃຫ້ເຫັນວ່າຊັບສິນໜ້ອຍກວ່າໜີ້ສິນນັ້ນ ໃຫ້ ທຫລ ສະເໜີລັດຖະບານ ອອກພັນທະບັດທີ່ປ່ຽນມືໄດ້ປະກອບເຂົ້າໃນທຶນ ເພື່ອປັບປຸງຖານະການເງິນໃຫ້ດີຂຶ້ນ.

**ມາດຕາ 64 (ໃໝ່) ການຄຸ້ມຄອງໜີ້ສິນ ຂອງທະນາຄານແຫ່ງ ສປປ ລາວ**

ໜີ້ສິນຂອງ ທຫລ ປະກອບດ້ວຍ ເງິນກີບພິມຈໍາໜ່າຍສູ່ຂອດຈໍລະຈອນ, ເງິນຝາກ, ເງິນກູ້ຢືມ, ພັນທະບັດ ທຫລ ແລະ ໜີ້ສິນອື່ນ.

ທຫລ ຕ້ອງຄຸ້ມຄອງໜີ້ສິນຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 65 ທຶນສ້າງຕັ້ງ ຂອງທະນາຄານແຫ່ງ ສປປ ລາວ**

ທຶນສ້າງຕັ້ງ ທຫລ ແມ່ນ ທຶນທີ່ລັດປະກອບໃຫ້ ແລະ ເປັນເຈົ້າຂອງທຶນແຕ່ພຽງຜູ້ດຽວ. ການປ່ຽນແປງທຶນສ້າງຕັ້ງແຕ່ລະໄລຍະ ແມ່ນ ລັດຖະບານເປັນຜູ້ກຳນົດ.

**ມາດຕາ 66 (ປັບປຸງ) ຄັງສຳຮອງທົ່ວໄປ ຂອງທະນາຄານແຫ່ງ ສປປ ລາວ**

ຄັງສຳຮອງທົ່ວໄປ ແມ່ນ ຄັງທີ່ສ້າງຂຶ້ນໄວ້ ເພື່ອທົດແທນການຂາດທຶນ ຈາກຜົນການດຳເນີນງານໃນປີຜ່ານມາ.

ຄັງສຳຮອງທົ່ວໄປ ສ້າງຂຶ້ນຈາກຜົນໄດ້ຮັບສຸດທິປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້.

**ມາດຕາ 67 (ປັບປຸງ) ຄັງຂະຫຍາຍການຜະລິດ ຂອງທະນາຄານແຫ່ງ ສປປ ລາວ**

ຄັງຂະຫຍາຍການຜະລິດ ແມ່ນ ຄັງທີ່ສະສົມໄວ້ ຊຶ່ງໄດ້ຈາກການຈັດສັນຜົນໄດ້ຮັບສຸດທິປະຈຳປີ ເພື່ອເປັນແຫຼ່ງທຶນສຳລັບການລົງທຶນກໍ່ສ້າງໂຄງລ່າງພື້ນຖານ ແລະ ປະກອບວັດຖຸເຕັກນິກ ໃນການກໍ່ສ້າງ ແລະ ປັບປຸງ ສຳນັກງານ, ຫ້ອງການ, ລະບົບເຕັກໂນໂລຊີ ຂໍ້ມູນ ຂ່າວສານ, ພາຫະນະ, ອຸປະກອນຮັບໃຊ້ວຽກງານວິຊາການ ແລະ ການສ້າງຕັ້ງວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ.

**ມາດຕາ 68 (ປັບປຸງ) ຄັງສຳຮອງພິເສດ ຂອງທະນາຄານແຫ່ງ ສປປ ລາວ**

ຄັງສຳຮອງພິເສດ ແມ່ນ ຄັງຕີມູນຄ່າ ຊັບສິນ ແລະ ໜີ້ສິນ, ເປັນຄັງໜຶ່ງທີ່ຢູ່ໃນໂຄງປະກອບຂອງທຶນ ເພື່ອໃຊ້ບັນທຶກສ່ວນຜິດດ່ຽງ ຊຶ່ງເກີດຈາກການປ່ຽນແປງມູນຄ່າຊັບສິນ ແລະ ໜີ້ສິນ ຍ້ອນການເໜັງຕີງຂອງລາຄາ ແລະ ອັດຕາແລກປ່ຽນ. ສ່ວນຜິດດ່ຽງດັ່ງກ່າວ ບໍ່ຖືກຄິດໄລ່ເຂົ້າໃນຜົນໄດ້ຮັບສຸດທິປະຈຳປີຂອງ ທຫລ.

**ມາດຕາ 69 (ໃໝ່) ງົບປະມານ ຂອງທະນາຄານແຫ່ງ ສປປ ລາວ**

ງົບປະມານຂອງ ທຫລ ແມ່ນການຄາດຄະເນແຜນລາຍຮັບ, ລາຍຈ່າຍ ແລະ ຜົນໄດ້ຮັບສຸດທິປະຈຳປີ ທີ່ໄດ້ຮັບການຮັບຮອງຈາກສະພາບໍລິຫານ ແລະ ການອະນຸມັດຈາກນາຍົກລັດຖະມົນຕີ.

ປີງົບປະມານຂອງ ທຫລ ໃຫ້ປະຕິບັດຕາມປີການບັນຊີ ທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້.

**ມາດຕາ 70 (ປັບປຸງ) ລາຍຮັບ ຂອງທະນາຄານແຫ່ງ ສປປ ລາວ**

ລາຍຮັບຂອງ ທຫລ ປະກອບດ້ວຍ:

1. ດອກເບ້ຍ ແລະ ຜົນຕອບແທນຈາກການບໍລິຫານຊັບສິນ;
2. ຄ່າທຳນຽມ ແລະ ຄ່າບໍລິການ;
3. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ການຈັດເກັບ ແລະ ຄຸ້ມຄອງ ລາຍຮັບ ໃຫ້ປະຕິບັດຕາມລະບຽບການຂອງ ທຫລ.

**ມາດຕາ 71 (ປັບປຸງ) ລາຍຈ່າຍ ຂອງທະນາຄານແຫ່ງ ສປປ ລາວ**

ລາຍຈ່າຍຂອງ ທຫລ ປະກອບດ້ວຍ:

1. ລາຍຈ່າຍປົກກະຕິ:
    1.1. ການປະຕິບັດນະໂຍບາຍເງິນຕາ ລວມທັງລາຍຈ່າຍໃນການພິມເງິນ;
    1.2. ດອກເບ້ຍ;
    1.3. ຄ່າທຳນຽມ ແລະ ຄ່າບໍລິການ;
    1.4. ການບໍລິຫານ;
    1.5. ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຊັບສິນ;
    1.6. ລາຍຈ່າຍອື່ນ ທີ່ເຫັນວ່າມີຄວາມຈຳເປັນ.
2. ລາຍຈ່າຍລົງທຶນ:
    2.1. ການກໍ່ສ້າງໂຄງລ່າງພື້ນຖານ;
    2.2. ການປະກອບວັດຖຸເຕັກນິກ;
    2.3. ການລົງທຶນສ້າງຕັ້ງວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ.

ການຄຸ້ມຄອງລາຍຈ່າຍ ໃຫ້ປະຕິບັດຕາມລະບຽບການຂອງ ທຫລ.

**ມາດຕາ 72 (ປັບປຸງ) ຜົນໄດ້ຮັບສຸດທິປະຈຳປີ ຂອງທະນາຄານແຫ່ງ ສປປ ລາວ**

ຜົນໄດ້ຮັບສຸດທິປະຈຳປີຂອງ ທຫລ ແມ່ນ ສ່ວນຜິດດ່ຽງ ທີ່ໄດ້ມາຈາກລາຍຮັບລົບລາຍຈ່າຍປົກກະຕິ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ແລະ ມາດຕາ 71 ຂອງກົດໝາຍສະບັບນີ້.

ໃນກໍລະນີຜົນໄດ້ຮັບສຸດທິປະຈຳປີເປັນບວກ ໃຫ້ຈັດແບ່ງຕາມບູລິມະສິດ ດັ່ງນີ້:

1. ແກ້ໄຂການຂາດທຶນສະສົມທັງໝົດ (ຖ້າມີ);
2. ເຂົ້າຄັງສຳຮອງທົ່ວໄປ ຢ່າງໜ້ອຍ ສາມສິບສ່ວນຮ້ອຍ;
3. ເຂົ້າຄັງຂະຫຍາຍການຜະລິດ ຢ່າງໜ້ອຍ ຊາວສ່ວນຮ້ອຍ;
4. ໄຖ່ຖອນຄືນພັນທະບັດທີ່ປ່ຽນມືໄດ້ຂອງລັດຖະບານ ທີ່ໄດ້ປະກອບໃຫ້ ທຫລ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ວັກທີສີ່ ຂອງກົດໝາຍສະບັບນີ້;
5. ມອບເຂົ້າງົບປະມານແຫ່ງລັດ.

ໃນກໍລະນີຜົນໄດ້ຮັບສຸດທິປະຈຳປີເປັນລົບ ໃຫ້ໂອນເຂົ້າເປັນການຂາດທຶນສະສົມໃນປີຕໍ່ໄປ ເພື່ອລໍຖ້າແກ້ໄຂ ໂດຍນຳໃຊ້ຄັງສຳຮອງທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້ ແລະ ຜົນການດຳເນີນງານສຸດທິເປັນບວກຂອງປີຕໍ່ໄປ ຕາມການຈັດແບ່ງຂອງສະພາບໍລິຫານ.

## ໝວດທີ 2
## ການບັນຊີ ຂອງທະນາຄານແຫ່ງ ສປປ ລາວ

**ມາດຕາ 73 ຫຼັກການບັນຊີ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ປະຕິບັດວຽກງານບັນຊີ ຕາມຫຼັກການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ແລະ ໝູນໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ໃຫ້ສອດຄ່ອງ ແລະ ເໝາະສົມ ກັບພາລະບົດບາດຂອງ ທຫລ.

**ມາດຕາ 74 ປີການບັນຊີ ຂອງທະນາຄານແຫ່ງ ສປປ ລາວ**

ປີການບັນຊີຂອງ ທຫລ ເລີ່ມຕົ້ນໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

**ມາດຕາ 75 (ປັບປຸງ) ເອກະສານລາຍງານການເງິນ**

ທຫລ ຕ້ອງສ້າງເອກະສານລາຍງານການເງິນປະຈຳ ວັນ, ເດືອນ, ງວດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ບົດອະທິບາຍຊ້ອນທ້າຍ ແລະ ເອກະສານອື່ນ ຕາມການກຳນົດຂອງສະພາບໍລິຫານ. ເອກະສານລາຍງານການເງິນປະຈຳປີ ຕ້ອງລາຍງານໃຫ້ ລັດຖະບານ ພາຍຫຼັງໄດ້ຮັບການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 81 ຂອງກົດໝາຍສະບັບນີ້.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 76 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ລະດົມທຶນ ແລະ ດຳເນີນທຸລະກິດ ການເງິນ, ການທະນາຄານ ທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທຫລ ຫຼື ຂະແໜງການທີ່ກ່ຽວຂ້ອງ;
2. ເອົາຊື່ ຫຼື ສັນຍາລັກ ຂອງ ທຫລ ໄປນຳໃຊ້ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ພັກພວກຂອງຕົນ;
3. ຂັດຂວາງ, ປະຕິເສດການຮ່ວມມື ກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເງິນ, ເງິນຕາ;
4. ສະໜອງ ຂໍ້ມູນ ຂ່າວສານ ໃຫ້ແກ່ ທຫລ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ນຳເອົາທະນະບັດ ແລະ/ຫຼື ເງິນຫຼຽນ ໄປຂາຍ ຫຼື ແລກປ່ຽນ ເພື່ອເກງກຳໄລໃນທຸກຮູບແບບ;
6. ປອມແປງ ທະນະບັດ ແລະ/ຫຼື ເງິນຫຼຽນ, ຖືຄອງ, ເຄື່ອນຍ້າຍ ແລະ ນຳໃຊ້ ເງິນປອມ;
7. ອອກ ແລະ ນຳໃຊ້ ເງິນດິຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
8. ຕັດ, ເຈາະ, ຈີກ, ຈູດ, ແຕ້ມ, ຂີດຂຽນ, ນຳໃຊ້ເຂົ້າໃນພິທີກຳ ແລະ ການກະທຳອື່ນ ທີ່ເປັນການທຳລາຍ ຫຼື ເຮັດໃຫ້ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ;
9. ໂຄສະນາ ເຜີຍແຜ່ ຫຼື ມີການກະທຳ ທີ່ເປັນການແຕະຕ້ອງເຖິງຄຸນຄ່າຂອງເງິນຕາຂອງ ສປປ ລາວ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 77 (ປັບປຸງ) ຂໍ້ຫ້າມສຳລັບ ທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ**

ຫ້າມ ທຫລ ລົງທຶນສ້າງຕັ້ງວິສາຫະກິດໃດໜຶ່ງ ຊຶ່ງບໍ່ແມ່ນວິສາຫະກິດທີ່ເຄື່ອນໄຫວວຽກງານຍຸດທະສາດ.

ຫ້າມພະນັກງານຂອງ ທຫລ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານ ໃນຫົວໜ່ວຍທຸລະກິດ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງ ທຫລ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ພັກພວກຂອງຕົນ;
4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ແລະ ສໍ້ລາດບັງຫຼວງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການກວດກາ

**ມາດຕາ 78 (ປັບປຸງ) ອົງການກວດກາ**

ອົງການກວດກາ ທຫລ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ຄະນະກຳມະການກວດກາ ແລະ ກົມກວດກາ ຂອງ ທຫລ;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 79 ເນື້ອໃນການກວດກາ**

ການກວດກາວຽກງານຂອງ ທຫລ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ການຈັດຕັ້ງປະຕິບັດພາລະບົດບາດ ແລະ ປະສິດທິຜົນຂອງວຽກງານ;
3. ເອກະສານລາຍງານການເງິນ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 80 ຮູບການການກວດກາ**

ການກວດກາວຽກງານຂອງ ທຫລ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຂອງ ທຫລ ນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

**ມາດຕາ 81 (ປັບປຸງ) ການກວດກາເອກະສານລາຍງານການເງິນ**

ເອກະສານລາຍງານການເງິນ ປະຈຳ ເດືອນ, ງວດ ແລະ ປີ ຂອງ ທຫລ ຕ້ອງໄດ້ຮັບການກວດກາໂດຍອົງການກວດກາພາຍໃນຂອງ ທຫລ.

ເອກະສານລາຍງານການເງິນປະຈຳປີຂອງ ທຫລ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນ ຈາກຄະນະກຳມະການກວດກາ ແລະ ອົງການກວດສອບແຫ່ງລັດ ຢ່າງເປັນປົກກະຕິ.

**ມາດຕາ 82 ການຮັກສາຄວາມລັບ**

ບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດວຽກງານກວດກາພາຍໃນ, ກວດກາພາຍນອກ ແລະ ປະສານງານຕ່າງໆ ຕ້ອງຮັກສາຂໍ້ມູນທີ່ເປັນຄວາມລັບຂອງ ທຫລ ທີ່ຕົນໄດ້ຮູ້, ໄດ້ເຫັນ ແລະ ບໍ່ໃຫ້ເປີດເຜີຍ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ ທຫລ.

## ພາກທີ VIII
## ວັນສ້າງຕັ້ງ, ເຄື່ອງໝາຍ ແລະ ຕາປະທັບ ຂອງທະນາຄານແຫ່ງ ສປປ ລາວ

**ມາດຕາ 83 (ປັບປຸງ) ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ**

ວັນສ້າງຕັ້ງ ທຫລ ແມ່ນ ວັນທີ 7 ຕຸລາ 1968.

ຂະແໜງການທະນາຄານ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍການຈັດກິດຈະກຳ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

**ມາດຕາ 84 (ປັບປຸງ) ເຄື່ອງໝາຍ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ມີເຄື່ອງໝາຍຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 85 (ປັບປຸງ) ຕາປະທັບ ຂອງທະນາຄານແຫ່ງ ສປປ ລາວ**

ທຫລ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານລັດຖະການ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 86 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 87 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 88 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 89 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 7 ມີນາ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ